# ສຶກສາຄຳປະສົມທີ່ເປັນຄຳນາມ ໃນວັດຈະນານຸກົມຂອງ ດຣ. ທອງຄຳ ອ່ອນມະນີສອນ

**ສັງຄົມ ສີສຸພັນ[1], ບອຍ ດວງຈັນ, ອຳໄພ ສອນທະລາ, ໄມພອນ ອິນວັນຄຳ ແລະ ຄຳຊາຍ ຈັນທະຫົງ**

*ສາຂາຄູພາສາລາວ-ວັນນະຄະດີ ພາກວິຊາຄູພາສາ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ*

[1] ***ຕິດຕໍ່ພົວພັນ:*** *ສັງຄົມ ສີສຸພັນ, ພາກວິຊາຄູພາສາ, ຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ ເບີໂທ: +856 20 5636 4988, ອີເມວ: Laysysouphan@hotmail.com*

***ຂໍ້ມູນບົດຄວາມ:***
*ວັນທີສະໜັກ: 25 ພຶດສະພາ 2021*
*ປັບປຸງສຳເລັດ: 12 ກໍລະກົດ 2021*
*ຕອບ-ຮັບ: 21 ກໍລະກົດ 2021*

## ບົດຄັດຫຍໍ້

ການສຶກສານີ້ ຈຸດປະສົງເພື່ອວິເຄາະໂຄງສ້າງ ແລະ ລັກສະນະທາງຄວາມໝາຍຂອງຄຳປະສົມທີ່ເປັນຄຳນາມ ໂດຍສຶກສາວັດຈະນານຸກົມຂອງ ດຣ. ທອງຄຳ ອ່ອນມະນີສອນ ວິທີການສຶກສາໃນດ້ານຄຳປະສົມຄື: ນຳຄຳປະສົມທີ່ເປັນຄຳນາມ ມາວິເຄາະໂຄງສ້າງ ແລະ ຄວາມໝາຍຂອງຄຳປະສົມທີ່ເປັນຄຳນາມ ໂດຍນຳຄວາມໝາຍມາຈຳແນກຕາມລັກສະນະທາງວັດທະນະທຳທາງພາສາ ຜົນການສຶກສາເຫັນວ່າ: ຄຳປະສົມທີ່ເປັນຄຳນາມໃນວັດຈະນານຸກົມ ຂອງ ດຣ. ທອງຄຳ ອ່ອນມະນີສອນ ມີຈຳນວນທັງໝົດ 606 ຄຳ. ຊຶ່ງມີໂຄງສ້າງເປັນຄຳນາມປະສົມກັບຄຳນາມຫຼາຍທີ່ສຸດຈຳນວນ 419 ຄຳ. ຄິດໄລ່ເທົ່າກັບ 69.14 ສ່ວນຮ້ອຍ. ສ່ວນໂຄງສ້າງຂອງຄຳປະສົມທີ່ເປັນຄຳນາມໜ້ອຍທີ່ສຸດ. ໄດ້ແກ່ຄຳກິລິຍາປະສົມກັບຄຳວິເສດຈຳນວນ 1 ຄຳ. ຄິດໄລ່ເທົ່າກັບ 0.16 ສ່ວນຮ້ອຍ ແລະ ຄຳວິເສດປະສົມກັບຄຳນາມຈຳນວນ 1 ຄຳ ຄິດໄລ່ເທົ່າກັບ 0.16 ສ່ວນຮ້ອຍ ໃນດ້ານຄວາມໝາຍຈາກການສຶກສາຄຳປະສົມທີ່ເປັນຄຳນາມສາມາດແບ່ງອອກໄດ້ເປັນ 2 ປະເພດຄື: ຄຳປະສົມທີ່ເປັນຄຳນາມມີຄວາມໝາຍກົງ ແລະ ຄຳປະສົມທີ່ເປັນຄຳນາມມີຄວາມໝາຍແຝງ ໂດຍນຳຄຳປະສົມທີ່ມີຄວາມ ໝາຍທັງ 2 ປະເພດ ມາຈັດໝວດໝູ່ຕາມລັກສະນະວັດທະນະທຳທາງພາສາພົບວ່າມີຄຳປະສົມທີ່ເປັນຄຳນາມທີ່ເປັນຄວາມໝາຍກົງມີຈຳນວນ 452 ຄຳ. ໃນໝວດຄຳກ່ຽວກັບທຳມະຊາດຫຼາຍທີ່ສຸດ 239 ຄຳ. ຄິດໄລ່ເທົ່າກັບ 52.85 ສ່ວນຮ້ອຍ. ສ່ວນຄຳປະສົມທີ່ເປັນຄຳນາມທີ່ເປັນຄວາມໝາຍກົງໃນໝວດຄຳກ່ຽວກັບສະຕິປັນຍາ, ອາລົມ ແລະ ຄຸນຄ່າໜ້ອຍທີ່ສຸດຄື 25 ຄຳ ຄິດໄລ່ເທົ່າກັບ 5.51 ສ່ວນຮ້ອຍ.ໃນດ້ານຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍແຝງມີຈຳນວນ 160 ຄຳ. ພົບວ່າຄຳປະສົມທີ່ເປັນຄຳນາມທີ່ເປັນຄວາມໝາຍແຝງໃນໝວດຄຳກ່ຽວກັບທຳມະຊາດຫຼາຍທີ່ສຸດຄື 98 ຄຳ. ຄິດໄລ່ເທົ່າກັບ 61.24 ສ່ວນຮ້ອຍ. ສ່ວນຄຳປະສົມທີ່ເປັນຄຳນາມທີ່ເປັນຄວາມໝາຍແຝງໃນໝວດຄຳກ່ຽວກັບສະຕິປັນຍາ, ອາລົມ ແລະ ຄຸນຄ່າໜອຍທີ່ສຸດຄື 18 ຄຳ. ຄິດໄລ່ເທົ່າກັບ 11.24 ສ່ວນຮ້ອຍ.

**ຄຳສັບສຳຄັນ:** *ຄຳປະສົມ, ໂຄງສ້າງ ແລະ ຄວາມໝາຍ*

# The study of compound nouns in the dictionary

**Sangkhome SYSOUPHANH[1], Boy DUANGCHAN, Amphai SONETHALA, Maiphone INVANHKHAM and Khamxay CHANHTHAHONG**

*Department of Language Pedagogy, faculty of education, Souphanouvong University, Lao PDR*

*[1]Correspondence: Sangkhome SYSOUPHANH, Department of Language Pedagogy, faculty of Education, Souphanouvong University, Tel: +856 20 5636 4988, E-mail: Laysysouphan@hotmail.com*

***Article Info:***
*Submitted: May 25, 2021*
*Revised: Jul 12, 2021*
*Accepted: Jul 21, 2021*

**Abstract**

The objective of this research is to analyze the structure and characteristic meaning of compound nouns in the dictionary of Dr. Thongkham Onmanisone. The research applied the following Methodologies to analyze the compound word: taking the compound nouns to analyze their structure and their meaning by using the meaning of those compound nouns to identify in linguistic characteristics. The findings of this research displayed that there are 606 compound nouns which is a structure of compound nouns (noun + noun) including 419 words; equaled 69.14%. The least compound words' structure was verb plus adverb; equaled 0.16% and adverb plus noun; equaled 0.16%. For the meaning part, the compound nouns are divided into two types such as direct compound nouns and indirect compound nouns. From grouping, these two types of compound nouns according to their linguistic and cultural characteristics found that there were 452 direct compound nouns. There were 239 compound nouns in the most natural vocabulary which equal 52.85 percent. There were 25 direct compound nouns of the vocabulary in intellectual, mood, and value equaled 5.51%. from 160 indirect compound nouns found 98 indirect compound nouns in the most vocabulary of nature equaled 61.24 percent. The least was indirect compound nouns in the vocabulary of intellectual, mood, and value which was 18 words; equaled 11.24%.

**Keywords:** *Compound nouns, structure and meaning*

## 1. ພາກສະເໜີ

ພາສາເປັນພາຫະນະຮັບໃຊ້ ການຄົບຄ້າແລກປ່ຽນຄວາມຮູ້ສຶກນຶກຄິດ ແລະ ຄວາມເຂົ້າໃຈຂອງຄົນໃນສັງຄົມ. ພາສາແມ່ນສິ່ງທີ່ຈຳເປັນ ແລະ ສຳຄັນຂອງມະນຸດ; ແມ່ນສ່ວນໜຶ່ງທີ່ສຳຄັນຂອງວັດທະນະທຳ ທີ່ມີຕໍ່ມະນຸດຕະຫຼອດເວລາ ແຕ່ອະດີດຈົນເຖິງປັດຈຸບັນ, ມັນໄດ້ກາຍເປັນມໍລະດົກຕົກທອດຕໍ່ເນື່ອງກັນມາໃນສັງຄົມ. ການດຳລົງຊີວິດຂອງມະນຸດໃນທຸກໆມື້ ຈຳເປັນຕ້ອງມີການພົວພັນກັບສະພາບແວດລ້ອມອ້ອມຂ້າງຂອງຕົນເປັນປະຈຳ. ດັ່ງນັ້ນ, ຈຶ່ງມີຊື່ເອີ້ນກ່ຽວກັບສະພາບແວດລ້ອມທີ່ແຕກຕ່າງກັນໄປຕາມທ້ອງຖິ່ນ, ສັງຄົມ ແລະ ພາສາ ຊຶ່ງມັນໄດ້ສະທ້ອນໃຫ້ເຫັນເຖິງ ວັດທະນະທຳ, ຄວາມຮັບຮູ້, ແນວຄວາມຄິດ, ຄວາມເຊື່ອ, ວິຖີຊີວິດ ແລະ ອື່ນໆຂອງທ້ອງຖິ່ນໂດຍຜ່ານການນຳໃຊ້ພາສາຂອງເຂົາເຈົ້າ ແລະ ມັກປາກົດເຫັນຢູ່ໃນເລື່ອງ ເຊັ່ນ: ນິທານ, ສຸພາສິດ, ຂັບ, ລຳ, ຊື່ເອີ້ນພີ່ນ້ອງ, ຊື່ເຄື່ອງໃຊ້ສອຍຕ່າງໆ ເປັນຕົ້ນ (ໂພທອງ ຊາທຳມາ, 2014, ໜ້າ 1).

ພາສາລາວ ເປັນພາສາໜຶ່ງທີ່ມີຄວາມເກົ່າແກ່ ເຊິ່ງປາ

ກົດຂຶ້ນຕາມມາກັບການເກີດມີຄົນລາວ. ພາສາລາວເປັນພາສາທີ່ມີຊີວິດ ແລະ ມີຄວາມສົມບູນຄື ມີໜ່ວຍສຽງພະຍັນຊະນະ, ສະຫຼະ ແລະ ວັນນະຍຸດເປັນຂອງຕົວເອງມີຄັງສັບ, ມີສຳນວນຄຳເວົ້າ ແລະ ສາມາດໃຊ້ຕິດຕໍ່ສື່ສານຄົບຄ້ວາຄວາມຄິດສະແດງຄວາມຮູ້ສຶກ ໄດ້ທຸກແບບທຸກກໍລະນີ. ພ້ອມນີ້ໃນເລື່ອງຂອງຄັງສັບ ກໍໄດ້ມີບັນດາຄຳໃໝ່ໆເກີດຂຶ້ນ ຫຼື ມີການຮັບເອົາຄຳອັນທີ່ຈຳເປັນຈາກພາສາອື່ນເຂົ້າມາໃຊ້ ເພື່ອສະໜອງຄວາມຕ້ອງການດ້ານຄວາມໝາຍ ແລະ ຈຳນວນຂອງຄຳໃຫ້ແກ່ພາສາລາວໃຫ້ພຽງພໍກັບຄວາມຕ້ອງການໃຊ້ໃນແຕ່ລະສະໄໝ. ການທີ່ວ່າພາສາລາວເປັນພາສາທີ່ມີຊີວິດນັ້ນ ກໍ່ເພາະພາສາລາວມີພື້ນຖານທາງພາສາອັນຄົບຖ້ວນ, ມີການຂະຫຍາຍຕົວ ແລະ ມີການໃຊ້ຢ່າງປົກກະຕິໃນສັງຄົມຕະຫຼອດມາ (ຄຳສອນ ທອງມີໄຊ, 2016, ໜ້າ 8).

ການສ້າງຄຳເປັນການປ່ຽນແປງທາງພາສາດ້ານຄຳວິທີໜຶ່ງເຮັດໃຫ້ຄຳລາວມີຫຼາຍພະຍາງຂຶ້ນດັ່ງທີ່ ອ່ອນແກ້ວ ນວນນະວົງ ພ້ອມດ້ວຍຄະນະ (1998, pp.3-4) ກ່າວວ່າ: ທຸກໆຄຳທີ່ໃຊ້ຢູ່ໃນພາສາລາວນັບທັງຄຳທີ່ໄດ້ຂຽນໄວ້ໃນວັດຈະນານຸກົມ ແລະ ຄຳທີ່ໄດ້ບັນທຶກໄວ້ໃນປຶ້ມ, ເອກະສານຕ່າງໆ, ຕະຫຼອດຮອດຄຳທີ່ໃຊ້ຢູ່ໃນຊີວິດປະຈຳວັນຂອງຄົນລາວນັ້ນ, ມີຄຳຫຼາຍຈຳພວກປົນເປກັນຢູ່ເຊັ່ນ: ບາງຈຳພວກກໍ ແມ່ນຄຳລາວແທ້ແຕ່ດັ້ງເດີມ, ບາງຈຳພວກກໍແມ່ນຄຳທີ່ມາຈາກພາສາອື່ນ, ບາງຈຳພວກກໍແມ່ນຄຳທີ່ບັນຍັດຂຶ້ນໃໝ່ ເພື່ອໃຊ້ເປັນຄຳສັບທາງວິຊາການ, ບາງຈຳພວກກໍ່ໃຊ້ແຕ່ສຳລັບເວົ້າເຊິ່ງເຄີຍເອີ້ນກັນວ່າພາສາຕະຫຼາດ, ບາງຈຳພວກກໍໃຊ້ທັງເວົ້າທັງຂຽນ. ຄຳຕ່າງໆດັ່ງກ່າວມານີ້, ຖ້າສັງເກດລັກສະນະຂອງຮູບຄຳ (ຮູບລັກສະນະ) ອາດຈະແບ່ງອອກເປັນສີ່ຊະນິດຄື ຄຳເຄົ້າ, ຄຳປະສົມ, ຄຳຊ້ອນ ແລະ ຄຳຊໍ້າ.

ວິທີສ້າງຄຳໃໝ່ໃນພາສາໄທທີ່ຫຼາຍທີ່ສຸດຄືຄຳປະສົມ (ສຸຄົນທາ ພຸ່ມເມືອງ, 2551, ໜ້າ 2). ການສ້າງຄຳປະສົມເປັນການປະສົມຄຳໄທ ກັບຄຳໄທ, ຄຳໄທ ກັບ ຄຳຢືມ ແລະ ຄຳຢືມ ກັບ ຄຳຢືມ ໂດຍການນຳເອົາຄຳຊະນິດດຽວກັນມາປະສົມກັນ ຊຶ່ງໝາຍເຖິງ ການນຳຕັ້ງແຕ່ສອງຄຳຂຶ້ນໄປມາຮວມກັນເປັນຄຳໃໝ່ ທີ່ມີລັກສະນະຕ່າງໄປຈາກຄຳຊ້ອນ, ຄຳຊໍ້າ, ຄຳສະໝາດ ດັ່ງນີ້: (ພູນພົງ ງາມກະເສມ, 2546, ໜ້າ 62) .

1. ເກີດຈາກຄຳມູນຕັ້ງແຕ່ 2 ຄຳ ມາປະສົມກັນ
2. ຄຳມູນທີ່ມາປະສົມກັນຕ້ອງມີຄວາມໝາຍຕ່າງກັນ
3. ຄຳມູນທີ່ປະສົມກັນນັ້ນ ອາດເປັນຄຳໄທ ກັບ ຄຳໄທ, ຄຳໄທກັບພາສາອື່ນໆ ຫຼື ເປັນຄຳພາສາອື່ນທັງໝົດຍົກເວັ້ນຄຳທີ່ມາຈາກພາສາອື່ນທັງໝົດ ຍົກເວັ້ນຄຳທີ່ມາຈາກພາສາບາລີ ຫຼື ສັນສະກິດ ທີ່ມາຕໍ່ກັນໃນລັກສະນະຄຳສະໝາດ.
4. ຄວາມໝາຍຄຳທີ່ເກີດໃໝ່ ຈະມີ 3 ລັກສະນະຄື: ມີເຄົ້າຄວາມໝາຍເດີມ, ມີຄວາມໝາຍປ່ຽນໄປ ຫຼື ມີທັງຄວາມໝາຍປ່ຽນໄປ ແລະ ມີຄວາມໝາຍເດີມຢູ່.

*ຄຳປະສົມທີ່ມີເຄົ້າຄວາມໝາຍເດີມເຊັ່ນ:*

**ກອນສົດ** ມາຈາກ ກອນ ປະສົມກັບ ສົດ

ກອນ ໝາຍເຖິງ ຄຳປະພັນຊະນິດໜຶ່ງ

ສົດ ໝາຍເຖິງ ໃໝ່

**ກອນສົດ** ໝາຍເຖິງ ກອນທີ່ຜູກຂຶ້ນ ແລະ ກ່າວໃນປັດຈຸບັນໂດຍບໍ່ໄດ້ຄິດມາກ່ອນ.

**ເສືອໂຄ່ງ** ມາຈາກ ເສືອ ປະສົມກັບ ໂຄ່ງ

ເສືອ ໝາຍເຖິງ ສັດປ່າສີ່ຕີນຮູບຮ່າງຄ້າຍຄື ແມວເປັນສັດຮ້າຍ ກິນສັດອື່ນເປັນອາຫານ

ໂຄ່ງ ໝາຍເຖິງ ຊື່ເສືອແນວໜຶ່ງເປັນເສືອແນວໃຫຍ່ໂຕສີເຫຼືອງ ມີລາຍສີດຳພາດແຕ່ຫຼັງເກືອບຮອດທ້ອງ ເອີ້ນເສືອໂຄ່ງ ຫຼື ລາຍພາດກອນ ກໍ່ເອີ້ນ.

**ເສືອໂຄ່ງ** ໝາຍເຖິງ ເສືອຕົວໃຫຍ່ລາຍພາດກອນໂຕໃຫຍ່ທີ່ສຸດ 8 ສອກ.

**ສາວແກ່** ມາຈາກ ສາວປະສົມກັບ ແກ່

ສາວ ໝາຍເຖິງ ເປັນຄຳບອກໝາຍເພດໃຊ້ປະກອບໜ້າຊື່ຂອງແມ່ຍິງ ດັ່ງເຊັ່ນ ສາວແພງ, ສາວເພົາ ເປັນຕົ້ນ.

SYSOUPHANH et al. (2021). Souphanouvong Journal of Multidisciplinary Research and Development
ISSN 2521-0653. Volume 7. Issue 1. Jan – Jun 2021. Page 186 - 196.

ແກ່ ໝາຍເຖິງ ເຖົ້າ, ເກົ່າ, ເກີງນານ, ເຂັ້ມ, ຫຼາຍ ໂພດ

**ສາວແກ່** ໝາຍເຖິງ ແມ່ຍິງທີ່ຍັງບໍ່ທັນໄດ້ຜົວຈົນອາຍຸລ່ວງ ເກີນກາຍໄວສາວ.

*ຄໍາປະສົມທີ່ມີຄວາມໝາຍປ່ຽນໄປໄດ້ແກ່ ຄໍາປະສົມທີ່ມີຄວາມໝາຍປ່ຽນໄປຈາກຄວາມໝາຍຂອງຄໍາທີ່ນໍາມາປະສົມກັນເຊັ່ນ:*

**ຂໍ້ຫາ** ມາຈາກ ຂໍ້ ປະສົມກັບ ຫາ

ຂໍ້ ໝາຍເຖິງ ຕອນໜຶ່ງໆ

ຫາ ໝາຍເຖິງ ສືບ, ເສາະ, ຄົ້ນ

**ຂໍ້ຫາ** ໝາຍເຖິງ ຄໍາກ່າວໂທດ

**ແຂງຂໍ້ ມາຈາກແຂງ ປະສົມກັບ ຂໍ້**

ແຂງ ໝາຍເຖິງ ລັກສະນະແໜ້ນແກ່ນ, ກັ່ນ ຫຼື ກຶກ ເຊິ່ງບໍ່ຫັກແຕກ, ບໍ່ເປື່ອຍ ຫຼື ເພຍາກ ເຊັ່ນ: ເຫຼັກມີຄວາມແຂງ, ດູກໄກ່ກໍ່ແຂງສໍ່າດູກເປັດ.

ຂໍ້ ໝາຍເຖິງ ສ່ວນທີ່ເປັນອັນຂອງສິ່ງທີ່ມາຕໍ່ກັນ,ຈຸດທີ່ຕໍ່ ກັນຂອງສິ່ງທີ່ເປັນທ່ອນ ເຊັ່ນ: ຂໍ້ຕີນ, ຂໍ້ມື, ຂໍ້ກະດູກ, ຂໍ້ອ້ອຍ, ຂໍ້ໄມ້.

**ແຂງຂໍ້** ໝາຍເຖິງ ບໍ່ອ່ອນຍອມ, ຖືກປາບແຕ່ບໍ່ຍອມອ່ອນ, ຕອບໂຕ້ດ້ວຍຄໍາເວົ້າທ້າທາຍຢ່າງບໍ່ອ່ອນຕໍ່ຄວາມນາບຂູ່ ຫຼື ກົດໜີບ, ໃຫ້ຄໍາເວົ້າແບບຕໍ່ລອງກັບຄືນຕໍ່ຜູ້ຂົ່ມຂູ່ ຫຼື ກົດໜີບ

**ຂາຍໜ້າ** ມາຈາກ ຂາຍປະສົມກັບໜ້າ

ຂາຍ ໝາຍເຖິງ ປ່ຽນສິນຄ້າທີ່ເປັນຊັບ, ວັດຖຸໂດຍເງິນ ຫຼື ວັດຖຸມີຄ່າເປັນຕົວປ່ຽນ ຫຼື ຊື້ ເຊັ່ນ ຂາຍຄວາຍໂຕນີ້ໄດ້ເງິນສາມລ້ານກີບ, ຂາຍເຂົ້າປີນີ້ໄດ້ຫ້າລ້ານກີບ

ໜ້າ ໝາຍເຖິງ ສ່ວນຂອງຫົວຕັ້ງແຕ່ໜ້າຜາກລົງມາເຖິງປາຍຄາງ, ສ່ວນໜຶ່ງຂອງຮ່າງກາຍທີ່ກົງກັນຂ້າມກັບຫຼັງ ເອີ້ນ ທາງໜ້າ.

**ຂາຍໜ້າ** ໝາຍເຖິງ ເຮັດໃຫ້ເສຍໜ້າ, ເຮັດໃຫ້ເສຍຊື່ສຽງ, ເສຍບົດບາດ ແລະ ອິດທິພົນ

*ຄໍາປະສົມທີ່ມີທັງຄວາມໝາຍທີ່ປ່ຽນໄປ ແລະ ຍັງ ມີເຄົ້າຄວາມໝາຍເດີມຢູ່ ທັງນີ້ຂຶ້ນຢູ່ກັບຂໍ້ຄວາມແວດລ້ອມ ເຊັ່ນ:*

**ເຄື່ອງມື** ມາຈາກ ເຄື່ອງ ປະສົມກັບ ມື

ເຄື່ອງ ໝາຍເຖິງ ສິ່ງຂອງ, ສິ່ງສໍາລັບປະກອບກັນ

ມື ໝາຍເຖິງ ສ່ວນຂອງຮ່າງກາຍຕໍ່ຈາກແຂນ

**ເຄື່ອງມື** ໝາຍເຖິງ ສິ່ງຂອງສໍາລັບໃຊ້ໃນການງານ ຫຼື ຄົນທີ່ຖືກໃຊ້ໃຫ້ເຮັດປະໂຫຍດ

**ລົດໄຟ** ມາຈາກ ລົດ ປະສົມກັບ ໄຟ

ລົດ ໝາຍເຖິງ ຍານພາຫະນະ ສໍາລັບຂີ່ໄປມາ ເຊັ່ນ ລົດຖີບ, ລົດໂອໂຕ, ລົດເກັ່ງ.

ໄຟ ໝາຍເຖິງ ທາດແນວໜຶ່ງທີ່ໃຫ້ເກີດຄວາມຮ້ອນ ແລະ ອົບອຸ່ນ, ຄວາມຮ້ອນ ທີ່ໄໝ້ສິ່ງຕ່າງໆໄດ້ ເອີ້ນວ່າໄຟ

**ລົດໄຟ** ໝາຍເຖິງລົດທີ່ຕໍ່ຕູ້ກັນເປັນຂະບວນຍາວຂັບເຄື່ອນໄປ ໂດຍມີຫົວລົດຈັກແກ່ລາກໃຫ້ແລ່ນໄປຕາມຮາງເຫຼັກ.

**ນໍ້າກ້ອນ** ມາຈາກນໍ້າ ປະສົມກັບ ກ້ອນ

ນໍ້າ ໝາຍເຖິງ ທາດທີ່ມີລັກສະນະແຫຼວຊຶມ ໄປໃນເນື້ອຂອງສິ່ງຕ່າງໆທີ່ເນື້ອບໍ່ແຈບໃຊ້ອາບ, ກິນ, ລ້າງ.

ກ້ອນ ໝາຍເຖິງ ຂອງທີ່ເປັນໜ່ວຍ, ຂອງທີ່ໂຮມກັນເປັນໜ່ວຍໜຶ່ງ, ຫີນເປັນໜ່ວຍ ເອີ້ນກ້ອນຫີນ; ເຫຼັກເປັນກ້ອນ ເອີ້ນ ກ້ອນເຫຼັກ

**ນໍ້າກ້ອນ** ໝາຍເຖິງ ນໍ້າທີ່ຖືກຄວາມເຢັນຫຼາຍແລ້ວແຂງເຂົ້າເປັນກ້ອນ ເອີ້ນນໍ້າກ້ອນ

ນອກຈາກນີ້ ສຸຄົນທາ ພຸ່ມເມືອງ (2551, ໜ້າ 3-4) ໄດ້ສຶກສາຄວາມໝາຍຂອງຄໍາປະສົມພົບວ່າ ມີການນໍາໄປໃຊ້ໃນທັງລັກສະນະຄວາມໝາຍກົງ ແລະ ຄວາມໝາຍແຝງດັ່ງຕົວຢ່າງຕໍ່ໄປນີ້:

**ຄວາມໝາຍກົງ ເຊັ່ນ**:

**ປາກຂົມ** ມາຈາກ

ປາກ ໝາຍເຖິງ ຊ່ອງສໍາລັບກິນອາຫານ, ຂອບຊ່ອງແຫ່ງສິ່ງຂອງຕ່າງໆ

ຂົມ ໝາຍເຖິງ ລົດຊາດຢ່າງກະເດົາ ຫຼື ບໍລະເພັດ

**ປາກຂົມ** ໝາຍເຖິງ ອາການທີ່ຮູ້ສຶກຂົມຢູ່ໃນປາກເມື່ອເວລາເຈັບໄຂ້

**ກາງແຈ້ງ** ມາຈາກ

ກາງ ໝາຍເຖິງ ເຄິ່ງໜຶ່ງຂອງສ່ວນຕ່າງໆ

ແຈ້ງ ໝາຍເຖິງ ສະຫວ່າງ, ຄັກ, ແນ່, ພະອາທິດສະຫວ່າງເອີ້ນຕາເວັນແຈ້ງ, ຕາວັນແຈ້ງ ກໍວ່າ

**ກາງແຈ້ງ** ໝາຍເຖິງທີ່ແຈ້ງ, ທີ່ສະຫວ່າງ, ທີ່ບໍ່ມືດ, ສະຖານທີ່ບໍ່ມືດ ເອີ້ນ ກາງແຈ້ງ.

**ນໍ້າປາ** ມາຈາກ

ນໍ້າ ໝາຍເຖິງທາດທີ່ມີລັກສະນະແຫຼວຊຶມໄປໃນເນື້ອຂອງສິ່ງຕ່າງໆທີ່ເນື້ອບໍ່ແຈບໃຊ້ອາບ, ກິນ, ລ້າງ.

ປາ ໝາຍເຖິງ ຊື່ສັດນໍ້າທີ່ຫາຍໃຈດ້ວຍເຫືອກ, ບາງຊະນິດມີເກັດ, ບາງຊະນິດບໍ່ມີເກັດ, ເກັດນ້ອຍກໍ່ມີເກັດໃຫຍ່ກໍ່ມີ

**ນໍ້າປາ** ໝາຍເຖິງ ນໍ້າທີ່ຜະລິດຈາກປາໂດຍເອົາປາໝັກໃສ່ເກືອແລ້ວຕົ້ມກອງເອົາແຕ່ນໍ້າ ໃຊ້ປຸງອາຫານຮຽກນໍ້າປາ

**ຄວາມໝາຍແຝງ ເຊັ່ນ:**

**ອົກຫັກ** ມາຈາກ

ອົກ ໝາຍເຖິງ ສ່ວນຂອງຮ່າງກາຍດ້ານໜ້າຢູ່ລະຫວ່າງຄໍກັບທ້ອງ, ໃຈ

ຫັກ ໝາຍເຖິງ ພັບງໍ, ພັບງໍຫຼືເຮັດໃຫ້ພັບເຮັດໃຫ້ງໍເພື່ອໃຫ້ຂາດອອກຈາກກັນ

**ອົກຫັກ** ໝາຍເຖິງ ຜິດຫວັງ (ມັກໃຊ້ໃນດ້ານຄວາມຮັກ)

**ແມ່ແຮງ** ມາຈາກ

ແມ່ ໝາຍເຖິງ ຍິງຜູ້ໃຫ້ກຳເນີດແກ່ລູກ, ຄຳທີ່ຮ້ອງຍິງຜູ້ໃຫ້ກຳເນີນຕົນ, ເປັນຄຳຮຽກຄົນຜູ້ຍິງທົ່ວໄປວ່າແມ່ຍິງ

ແຮງ ໝາຍເຖິງ ກຳລັງ, ອຳນາດ, ສັກສິດ, ກຳລັງກາຍ ເອີ້ນແຮງາຍ, ກຳລັງໃຈ ເອີ້ນແຮງໃຈ

**ແມ່ແຮງ** ໝາຍເຖິງ ເຄື່ອງສຳລັບຍົຂອງໜັກ

**ວົງການ** ມາຈາກ

ວົງ ໝາຍເຖິງ ຮູບທີ່ມີເສັ້ນໂຄ້ງເຂົ້າມາຈຸກັນ ເອີ້ນວົງກົມ ຖ້າຮີ ເອີ້ນວົງຍາວ

ການ ໝາຍເຖິງ ວຽກທຸລະ, ໜ້າທີ່, ການງານ, ກິດຈະການ ກໍ່ວ່າ

**ວົງການ** ໝາຍເຖິງ ໜ່ວຍງານຂອງລັດເຊັ່ນ ຂ້າລັດຖະການ, ທະຫານ, ຕຳຫຼວດ, ໜ່ວຍງານລັດວິສະຫະກິດເຊັ່ນ ການໄຟຟ້າ, ການປະປາ ໜ່ວຍງານເອກະຊົນ ເຊັ່ນ ພໍ່ຄ້າ, ນັກທຸລະກິດຕ່າງໆ ເອີ້ນວົງການ.

ໃນປັດຈຸບັນມີເອກະສານທີ່ຮວບຮວມຄຳປະສົມທີ່ຫຼາກຫຼາຍ ເຊັ່ນ ພົດຈະນານຸກົມສະບັບລາດສະບັນດິດສະຖານ 2542 ພົດຈະນານຸກົມສະບັບມະຕິຊົນເປັນຕົ້ນ ໃນສ່ວນຂອງວັດຈະນານຸກົມພາສາລາວນັ້ນຖືວ່າ ເປັນເອກະສານທີ່ໜ້າສົນໃຈ ທັງນີ້ເນື່ອງຈາກ ວັດຈະນານຸກົມພາສາລາວ ເປັນສະບັບປັບປຸງໃໝ່ ເພາະວ່າ ວັດຈະນານຸກົມພາສາລາວຄື ຄັງພາສາຂອງຊາດທີ່ມີບົດບາດສຳຄັນຢ່າງຍິ່ງຕໍ່ການອະນຸຮັກປົກປັກຮັກສາ ແລະ ພັດທະນາວັດທະນະທຳ ແລະ ຖືເປັນປຶ້ມປະເພດອ້າງອີງທີ່ຈຳເປັນ ແລະ ສຳຄັນທີ່ສຸດ ໃນການໃຊ້ພາສາໃຫ້ຖືກຕ້ອງ ທັງໃນດ້ານການຂຽນ ແລະ ປາກເວົ້າ. ແຕ່ການເຮັດວັດຈະນານຸກົມນັ້ນ ນັບວ່າເປັນວຽກງານທີ່ຫຍຸ້ງຍາກ ລຳບາກສັບສົນຫຼາຍເພາະຕ້ອງໄດ້ຄິດຫງໍາຢ່າງລໍ້າເລິກ ຕ້ອງດຸໝັ່ນຂະຫຍັນພຽນສະສົມຮັບໂຮມເກັບກຳຂໍ້ມູນຈຳນວນມະຫາສານ ແລະ ຕ້ອງໄດ້ພິສູດກວດກາ ພິຈາລະນາເລືອກເຟັ້ນຄຳສັບ,ໃຫ້ນິຍາມ ແລະຄົ້ນຄິດ ທົບທວນຫຼາຍຫຼືບຫຼາຍຕ່າວ ກວ່າຈະຕົກລົງປົງໃຈ ຕົດສິນເອົາຄຳໃດຄຳໜຶ່ງໄດ້ (ວັດຈະນານຸກົມພາສາລາວຂອງ ດຣ. ທອງຄຳ ອ່ອນມະນີສອນ 2008).

ໃນການສຶກສາຄຳປະສົມ ຈາກໂຄງສ້າງຂອງຄຳປະສົມ ທີ່ເຮັດໜ້າທີ່ເປັນຄຳນາມ ໄດ້ແກ່ ຄຳປະສົມທີ່ເກີດຈາກຄຳຊະນິດດຽວກັນມາຮວມກັນ ເມື່ອຮວມກັນແລ້ວຍັງຄົງເປັນຄຳຊະນິດເດີມຄື ຄຳນາມ ກັບຄຳນາມເຊັ່ນ ນໍ້າເຜິ້ງ, ແຜ່ນສຽງ ຄຳປະສົມທີ່ເກີດຈາກຄຳຕ່າງຊະນິດມາຮວມກັນ ຄຳປະສົມທີ່ໄດ້ຈະເປັນຄຳຊະນິດໃດຊະນິດໜຶ່ງຕາມຊະນິດ

ຂອງຄຳທີ່ມາປະສົມຄື ຄຳກິລິຍາປະສົມ ກັບຄຳນາມ ຄຳທີ່ໄດ້ຈະເປັນຄຳນາມເຊັ່ນ ກັນແດດ, ອັດລົມ ຄຳນາມປະສົມກັບຄຳກິລິຍາ ຄຳທີ່ໄດ້ຈະເປັນຄຳນາມເຊັ່ນ ໄຂ່ຈືນ, ຂໍ້ຂຽນ ແລະ ຄຳປະສົມທີ່ເກີດຈາກຄຳຊະນິດດຽວກັນ ຫຼື ຄຳຕ່າງຊະນິດກັນມາປະສົມກັນ ຄຳປະສົມທີ່ເກີດຂຶ້ນ ຈະກາຍເປັນຄຳຊະນິດອື່ນທີ່ບໍ່ແມ່ນຊະນິດເດີມຂອງຄຳທີ່ມາປະສົມກັນເຊັ່ນ ຄຳກິລິຍາປະສົມ ກັບຄຳກິລິຍາ ຄຳທີ່ໄດ້ເປັນຄຳນາມເຊັ່ນ ກັນຊົນ, ຮ້ອຍກອງ ເປັນຕົ້ນ.

ນອກຈາກການສຶກສາທາງດ້ານໂຄງສ້າງຂອງຄຳປະສົມທີ່ເຮັດໜ້າທີ່ເປັນຄຳນາມແລ້ວ ທາງດ້ານຄວາມໝາຍຂອງຄຳກໍມີສ່ວນສຳຄັນທີ່ເຮັດໃຫ້ເກີດຄວາມເຂົ້າໃຈຄຳປະສົມຫຼາຍຍິ່ງຂຶ້ນ ອັນນຳໄປສູ່ການໃຊ້ຄຳປະສົມເຫຼົ່ານັ້ນໄດ້ຢ່າງຖືກຕ້ອງກົງຄວາມໝາຍທີ່ຕ້ອງການສື່ສານເພາະໃນພາສາລາວຍັງມີຄຳໃຊ້ຢູ່ເປັນຈຳນວນຫຼວງຫຼາຍຈຶ່ງຈຳເປັນຢ່າງຍິ່ງທີ່ຈະຮູ້ເລື່ອງຄວາມໝາຍຂອງຄຳປະສົມ ດັ່ງທີ່ ສົມພອນ ມັນຕະສູດ (2525, ໜ້າ 72) ກ່າວວ່າ ພາສາໄທມີລັກສະນະພິເສດຢ່າງໜຶ່ງຄື ຄຳໆດຽວອາດມີຫຼາຍຄວາມໝາຍ ຫຼື ຄຳບາງຄຳມີຄວາມໝາຍຄ້າຍຄືກັນ, ໃກ້ຄຽງກັນ ຈຶ່ງຈຳເປັນຢ່າງຍິ່ງທີ່ຈະຕ້ອງຮູ້ຈັກທັງຄວາມໝາຍ ແລະ ວິທີການໃຊ້ຄຳໃຫ້ເໝາະສົມ.

ເນື່ອງຈາກວັດຈະນານຸກົມ ຂອງ ດຣ. ທອງຄຳ ອ່ອນມະນີສອນ ໄດ້ເພີ່ມເຕີມຄຳສັບໃໝ່ໆທີ່ປາກົດເຂົ້າມາ ຄະນະຄົ້ນຄວ້າຈຶ່ງມີຄວາມສົນໃຈທີ່ຈະສຶກສາຄຳປະສົມທີ່ປາກົດໃນວັດຈະນານຸກົມ ຂອງ ດຣ. ທອງຄຳ ອ່ອນມະນີສອນ ວ່າມີໂຄງສ້າງ  ແລະ ລັກສະນະຄວາມໝາຍເປັນແນວໃດ ໂດຍນຳໂຄງສ້າງ ແລະ ລັກສະນະທາງຄວາມໝາຍຄວາມໝາຍຂອງຄຳປະສົມມາວິເຄາະ ເພື່ອເປັນປະໂຫຍດໃນການນຳຄຳປະສົມມາໃຊ້ຢ່າງມີປະສິດທິຜົນຍິ່ງຂຶ້ນ. ການຄົ້ນຄວ້າຄັ້ງນີ້ແມ່ນເພື່ອ

1). ເພື່ອວິເຄາະໂຄງສ້າງຂອງຄຳປະສົມທີ່ເປັນຄຳນາມໃນວັດຈະນານຸກົມຂອງ ດຣ ທອງຄຳ ອ່ອນມະນີສອນ; 2). ເພື່ອວິເຄາະລັກສະນະທາງຄວາມໝາຍຂອງຄຳປະສົມທີ່ເປັນຄຳນາມໃນວັດຈະນານຸກົມຂອງ ດຣ ທອງຄຳ ອ່ອນມະນີສອນ.

## 2. ອຸປະກອນ ແລະ ວິທີການ

### 2.1 ຂອບເຂດຂອງການຄົ້ນຄວ້າ

ການສຶກສາຄຳປະສົມທີ່ປາກົດຢູ່ໃນວັດຈະນານຸກົມ ຂອງ ດຣ ທອງຄຳ ອ່ອນມະນີສອນ ເນື່ອງຈາກໃນວັດຈະນານຸກົມ ມີຄຳປະສົມຢູ່ເປັນຈຳນວນຫຼາຍ ເຊິ່ງມີທັງຄຳປະສົມທີ່ເປັນຄຳລາວເດີມ, ຄຳປະສົມທີ່ເປັນຄຳຢືມມາຈາກພາສາອື່ນທີ່ເປັນຊື່ສະເພາະວິຊາ, ຄຳປະສົມທີ່ເກີດຈາກຄຳມູນຫຼາຍພະຍາງທີ່ມີຫຼາຍກວ່າສອງຄຳຂຶ້ນໄປ. ດັ່ງນັ້ນ, ຄະນະຄົ້ນຄວ້າຈຶ່ງເລືອກສຶກສາສະເພາະຄຳປະສົມທີ່ເກີດຈາກຄຳມູນພະຍາງດຽວທີ່ເປັນຄຳລາວເດີມ ຈຳນວນ 2 ຄຳ ມາປະສົມກັນ ແລະ ຕ້ອງບໍ່ເປັນຄຳປະສົມທີ່ມີການສະແດງລັກສະນະຄຳ; ການສຶກສາໂຄງສ້າງ ແລະ ລັກສະນະຄວາມໝາຍຂອງຄຳປະສົມ ຕາມປະເດັນຕໍ່ໄປນີ້: ວິເຄາະຄຳປະສົມທີ່ເປັນຄຳນາມຕາມເກນຂອງ ວິໄນ ຟູ່ລະຫົງ (2534), ຄວາມໝາຍຂອງຄຳປະສົມຕາມເກນຂອງ ອຸດົມ ອະໂລດສີກະຄິດ ຄື

1.) ຄຳປະສົມທີ່ມີຄວາມໝາຍກົງ

2.) ຄວາມປະສົມທີ່ມີຄວາມໝາຍແຝງ (2551)

ໂດຍນຳເອົາຄຳປະສົມທີ່ມີຄວາມໝາຍທັງສອງປະເພດມາຈັດໝວດໝູ່ຕາມເກນຂອງ ຈິນດາ ງາມສຸທິ ໂດຍຈັດໝວດໝູ່ຕາມລັກສະນະທາງວັດທະນະທຳພາສາ ແບ່ງອອກເປັນ 4 ໝວດໄດ້ແກ່

1.) ໝວດຄຳກ່ຽວກັບທຳມະຊາດ

2.) ໝວດຄຳກ່ຽວກັບພຶດຕິກຳ ແລະ ກິດຈະກຳຂອງມະນຸດ

3.) ໝວດຄຳກ່ຽວກັບສະຕິປັນຍາ, ອາລົມ ແລະ ຄຸນຄ່າ

4.) ໝວດຄຳກ່ຽວກັບຄວາມສຳພັນຂອງບຸກຄົນ

### 2.2 ວິທີດຳເນີນການຄົ້ນຄວ້າ

ການວິເຄາະໂຄງສ້າງ ແລະ ຄວາມໝາຍຂອງຄຳປະສົມທີ່ເປັນຄຳນາມຈາກວັດຈະນານຸກົມຂອງ ດຣ. ທອງຄຳ ອ່ອນມະນີສອນ ມີຂັ້ນຕອນດຳເນີນການ ດັ່ງນີ້:

ຂັ້ນຕອນເກັບຮວບຮວມຂໍ້ມູນ

1. ຮວບຮວມຄຳປະສົມທີ່ເປັນຄຳນາມ ຈາກວັດຈະນານຸກົມຂອງ ດຣ. ທອງຄຳ ອ່ອນມະນີສອນ.

2. ສຶກສາ ແລະ ຮວບຮວມຂໍ້ມູນເອກະສານ, ໜັງສື , ຕຳລາ ແລະ ງານວິໄຈທີ່ກ່ຽວຂ້ອງ.

ຂັ້ນວິເຄາະຂໍ້ມູນ ແບ່ງອອກເປັນ 2 ສ່ວນຄື:

1. ວິເຄາະໂຄງສ້າງຂອງຄຳປະສົມ

2. ວິເຄາະຄວາມໝາຍຂອງຄຳປະສົມ

## 3. ຜົນໄດ້ຮັບ

ການວິເຄາະໂຄງສ້າງຂອງຄຳປະສົມທີ່ເປັນຄຳນາມໃນວັດຈະນານຸກົມຂອງ ດຣ. ທອງຄຳ ອ່ອນມະນີສອນ ພົບວ່າ ການໂຄງສ້າງ ຂອງຄຳປະສົມທີ່ເປັນຄຳນາມມີຈຳນວນທັງໝົດ 606 ຄຳ, ຈັດແບ່ງອອກເປັນ 8 ໂຄງສ້າງ ໂດຍໂຄງສ້າງ ຄຳນາມ ປະສົມກັບຄຳນາມ ຫຼາຍທີ່ສຸດ ເທົ່າກັບ 69.14%, ຮອງລົງມາແມ່ນໂຄງສ້າງ ຄຳນາມປະສົມກັບຄຳກິລິຍາ ເທົ່າກັບ 13.36%, ໂຄງສ້າງ ຄຳຄຸນນາມປະສົມກັບຄຳນາມ ແລະ ໂຄງສ້າງ ຄຳກິລິຍາປະສົມກັບຄຳຄຸນນາມ ໜ້ອຍທີ່ສຸດ ເທົ່າກັບ 0.16% (ຕາຕະລາງທີ 1).

ການວິເຄາະຄວາມໝາຍຂອງຄຳປະສົມທີ່ເປັນຄຳນາມ ທີ່ມີຄວາມໝາຍກົງ ເຊິ່ງຈຳແນກຕາມເກນລັກສະນະທາງວັດທະນະທຳພາສາ ພົບວ່າຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍກົງ ໃນໝວດຄຳກ່ຽວກັບຄວາມທຳມະຊາດຫຼາຍທີ່ສຸດ ເທົ່າກັບ 53.06%, ສ່ວນຄຳປະສົມທີ່ເປັນຄຳນາມທີ່ເປັນຄວາມໝາຍກົງໃນໝວດຄຳກ່ຽວກັບສະຕິປັນຍາ , ອາລົມ ແລະ ຄຸນຄ່າ ໜ້ອຍທີ່ສຸດ ເທົ່າກັບ 5.5% (ຕາຕະລາງທີ 2) ແລະ ການວິເຄາະຄວາມໝາຍຂອງຄຳປະສົມທີ່ເປັນຄຳນາມ ທີ່ມີຄວາມໝາຍແຝງ ເຊິ່ງຈາແນກຕາມເກນລັກສະນະທາງວັດທະນະທຳພາສາ ພົບວ່າຄຳປະສົມທີ່ເປັນຄຳນາມທີ່ເປັນຄວາມໝາຍແຝງ ໃນໝວດຄຳກ່ຽວກັບທຳມະຊາດຫຼາຍທີ່ສຸດ ເທົ່າກັບ 61.08%, ຄຳປະສົມທີ່ເປັນຄຳນາມທີ່ເປັນຄວາມໝາຍແຝງໃນໝວດຄຳກ່ຽວກັບສະຕິປັນຍາ, ອາລົມ ແລະ ຄຸນຄ່າ ໜ້ອຍທີ່ສຸດ ເທົ່າກັບ 11.09% (ຕາຕະລາງທີ 3).

## 4. ວິພາກຜົນ

ການຄົ້ນຄວ້າໂຄງສ້າງຂອງຄຳປະສົມທີ່ເປັນຄຳນາມໃນວັດຈະນານຸກົມຂອງ ດຣ. ທອງຄຳ ອ່ອນມະນີສອນ ພົບວ່າມີໂຄງສ້າງຂອງຄຳຈຳນວນ 8 ລັກສະນະຄື ຄຳນາມປະສົມກັບຄຳນາມ, ຄຳນາມປະສົມກັບຄຳກິລິຍາ, ຄຳນາມປະສົມກັບຄຳຄຸນນາມ, ຄຳກິລິຍາປະສົມກັບຄຳນາມ, ຄຳກິລິຍາປະສົມກັບຄຳກິລິຍາ, ຄຳນາມປະສົມກັບຄຳບຸບພະບົດ, ຄຳຄຸນນາມປະສົມກັບຄຳນາມ, ຄຳກິລິຍາປະສົມກັບຄຳຄຸນນາມໂດຍພົບວ່າເຖິງແມ່ນວ່າຈະມີຄຳປາກົດເພີ່ມຂຶ້ນແຕ່ໂຄງສ້າງຍັງມີລັກສະນະເຊັ່ນດຽວກັບໂຄງສ້າງເດີມ ຕາມທິດສະດີຂອງ ວິໄນ ພູ່ລະຫົງ ເຊິ່ງຄະນະຄົ້ນຄວ້າໄດ້ນຳມາໃຊ້ປະກອບໃນການສຶກສາຄົ້ນຄວ້າ.

ນອກຈາກນີ້ ຍັງພົບຄຳປະສົມທີ່ເປັນຄຳນາມມີໂຄງສ້າງເປັນຄຳນາມປະສົມກັບຄຳນາມຫຼາຍທີ່ສຸດຄື 419 ຄຳ ຄິດໄລ່ເທົ່າກັບ 69.14 ສ່ວນຮ້ອຍ ອາດເນື່ອງຈາກການສ້າງຄຳຈາກຄຳນາມ ເຊິ່ງເປັນສິ່ງທີ່ເບິ່ງເຫັນເປັນຮູປະທຳນັ້ນເຂົ້າໃຈໄດ້ງ່າຍກວ່າ ແລະ ເຮັດໃຫ້ມີຄວາມໝາຍທີ່ຊັດເຈນຫຼາຍຍິ່ງຂຶ້ນ ລຳດັບ 2 ຄືໂຄງສ້າງ ຄຳນາມປະສົມກັບຄຳກິລິຍາມີຈຳນວນ 81 ຄຳ ຄິດໄລ່ເທົ່າກັບ 13.36 ສ່ວນຮ້ອຍ ເພາະເປັນການນຳຄຳໄປໃຊ້ໃນລັກສະນະສະແດງອາການທີ່ປາກົດໃຊ້ໃນການດຳລົງຊີວິດປະຈຳວັນ ລຳດັບທີ 3 ຄື ໂຄງສ້າງຂອງຄຳນາມປະສົມກັບຄຳຄຸນນາມ ມີຈຳນວນ 77 ຄຳ ຄິດໄລ່ເທົ່າກັບ 12.70 ສ່ວນຮ້ອຍ ເພາະເປັນການບອກລັກສະນະຂອງສິ່ງຂອງເພື່ອປະກອບໃຫ້ມີຄວາມໝາຍທີ່ຊັດເຈນ ສ່ວນໂຄງສ້າງຂອງຄຳປະສົມທີ່ນຳມາໃຊ້ເປັນຄຳນາມໜ້ອຍທີ່ສຸດໄດ້ແກ່ຄຳກິລິຍາປະສົມກັບຄຳຄຸນນາມມີຈຳນວນ 1 ຄຳ ຄິດໄລ່ເທົ່າກັບ 0.16 ສ່ວນຮ້ອຍ.

ຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍແຝງມີຈຳນວນ 162 ຄຳ ເຊິ່ງເປັນຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍແຝງກ່ຽວກັບທຳມະຊາດຫຼາຍທີ່ສຸດຈຳນວນ 99 ຄຳ ຄິດໄລ່ເທົ່າກັບ 61.08 ສ່ວນຮ້ອຍ ແລະ ຄຸນຄ່າໜ້ອຍທີ່ສຸດມີຈຳນວນ 18 ຄຳ ຄິດເປັນສ່ວນຮ້ອຍ 11.9 ສ່ວນຮ້ອຍເນື່ອງຈາກເປັນຂໍ້ຈຳກັດຂອງຄຳທີ່ໃຊ້ຈຶ່ງມີການໃຊ້ໜ້ອຍຈະ

ເຫັນໄດ້ວ່າຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍກົງຫຼາຍກວ່າຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍແຝງ.

## 5. ສະຫຼຸບ

ຜ່ານການວິເຄາະໂຄງສ້າງ ແລະ ຄວາມໝາຍຂອງຄຳປະສົມໃນວັດຈະນານຸກົມຂອງ ດຣ. ທອງຄຳ ອ່ອນມະນີສອນ, 2008 ເຊິ່ງສາມາດສະຫຼຸບໄດ້ດັ່ງນີ້: ການວິເຄາະໂຄງສ້າງຂອງຄຳປະສົມທີ່ເປັນຄຳນາມ ພົບວ່າມີຈຳນວນທັງໝົດ 606 ຄຳ ໂດຍມີໂຄງສ້າງຄຳປະສົມຢູ່ 8 ລັກສະນະໂຄງສ້າງ; ການວິເຄະຄວາມໝາຍຂອງຄຳປະສົມທີ່ເປັນຄຳນາມ ມີ 2 ລັກສະນະຄວາມໝາຍຄື ລັກສະນະຄວາມໝາຍກົງ ແລະ ຄວາມໝາຍແຝງ.

## 6. ຂໍ້ຂັດແຍ້ງ

ຂ້າພະເຈົ້າໃນນາມຄະນະຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ບໍ່ໄດ້ເອື້ອຜົນປະໂຫຍດໃຫ້ກັບພາກສ່ວນໃດໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າ ມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ

## 7. ເອກະສານອ້າງອີງ

ຄຳຮຸ່ງ ແສນມະນີ. (1998). ປຶ້ມວິຊາທິດສະດີພາສາ, ສຳລັບໂຮງຮຽນສ້າງຄູລະບົບ 11+3 ປີທີ 3, ກະຊວງສຶກສາທິການ, ສູນພັດທະນາຄູ.

ບຸນຍໍ ພິມມະບຸດ, ອິນປັນ ວັນນະສຸກ.(1998). ແບບຮຽນພາສາລາວ1, ສຳລັບໂຮງຮຽນສ້າງຄູລະບົບ 11+3 ປີທີ 1, ກະຊວງສຶກສາທິການ, ສູນພັດທະນາຄູ.

ບົວລີ ປະພາພັນ, ບຸນມີ ກົງມະນີ, ບຸນເລີດ ແສງສຸລິນ ແລະ ມີໄຊ ສຸກຈະເລີນ. (2002). ປຶ້ມພາສາລາວ, ມະຫາວິທະຍາໄລແຫ່ງຊາດ, ນະຄອນຫຼວງວຽງຈັນ.

ບຸນມີ ກົງມະນີ. (1998). ປຶ້ມແບບຮຽນວິຊາ ພາສາລາວ ຊັ້ນມັດທະຍົມສຶກສາ ປີທີ 5, ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າ ວິທະຍາສາດການສຶກສາ, ວຽງຈັນ.

ປົງຄຳ ສີສຸວັນ, (2000). ປຶ້ມໄວຍາກອນປັດຈຸບັນ ພາກທີ 2 ວະຈີວິພາກ, ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ.

ພູມີ ວົງວິຈິດ. (1967). ປຶ້ມໄວຍາກອນລາວ, ຈັດພິມໂດຍຫ້ອງການສູນກາງແນວລາວຮັກຊາດ, ພິມເທື່ອທີ 2.

ອອນແກ້ວ ນວນນະວົງ, ຄຳຮຸ່ງ ແສນມະນີ, ປານິດ ສຸຂະນຸວົງ ແລະ ປົງຄຳ ສີສຸວັນ. (1998). ປຶ້ມແບບຮຽນວິຊາພາສາລາວ, ຊັ້ນມັດທະຍົມສຶກສາປີທີ 4, ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ, ວຽງຈັນ.

กมล การกุศ. (2543). **ทักษะ และ ความรู้ทางภาษาไทย**, พิษณุโลก.

จีระพรรณ ดีพลงาม. (2525) **การเปลี่ยนแปลงของคำนาม,** อักขราภิธานศรับท์ของหมอปรัดเลและพจนานุกรมฉบับราชบณฑิตยสถาน. ปริญญานิพนธ์ กศ. มหาวิทยาลัย.มหาสารคาม.

จุไรรัตน์ ลักษณะศิรี และ บาหยัน อิ่มสำราญ. (2547). **การใช้ภาษาไทยกรุงเทพฯ,** มหาวิทยาลัยศิลปากร.

จินดา เฮงสมบูนณ์. (2542). **ภาษาศาสตร์เบื้องต้น**, กรุงเทพฯ,ชมรมเด็ก.

สุคนธ์ธา พุ่มเมือง. (2551). **การวิเคราะห์โครงสร้าง และความหมายของคำประสมในพจนานุกรมฉบับาชบัณฑิตยสถาน พ.ศ. 2543** , ปริญญานิพนธ์ กศม, มหาวิทยาลัยนเรศวร, พิษณุโลก.

สุริยา รัตนกุล. (2544). **อรรถศาสตร์เบื้องต้น**, นครปฐม, สถาบันวิจัยภาษาและวัฒนธรรมเพื่อพัฒนาชนบท, มหาวิทยาลัยมหิดล.

แสงเทียน เพิ่งคุ้ม. (2535). **วิเคราะห์คำประสมจากพจนานุกรมฉบับราชบัณฑิตยสถาน.ศ.พ**2525. พิษณุโลก, มหาวิทยาลัยนเรศวร .ม.ปริญญานิพนธ์ กศ.

สมพร มันตะสูตร. (2525). **สัมมนาการใช้ภาษาไทยในปัจจุบัน**, โอเดียนสโตร์, กรุงเทพฯ.

ทิพย์สุดา นัยทรัพย์. (2539). **ภาษาสาสตร์เบื้องต้น**. พิมพ์ครั้งที่ 3 พิษณุโลก.สถาบันราชภัฏพิบูลสงคราม.

นิตยา กาญจนะวรรณ เสาวลักษณ์ อนันตสานต์ และทิพย์สุเนตร อนัมบุตร. (2546). **ลักษณะ และ การใช้ภาษาไทย**, กรุงเทพฯ, มหาวิทยาลัยรามคำแหง.

นิตยา กาญจนะวรรณ. (2546). **การวิเคราะห์โครงสร้างกาษาไทย**, กรุงเทพฯ: มหาวิทยาลัยรามคำแหง.

นพดล จันทร์เพ็ญ. (2534). **การใช้ภาษาไทย**, กรุงเทพฯ, แสงศิลป์การพิมพ์.

บรรจบ พันธุเมธา. (2523). **ลักษณะการใช้ภาษาไทย**, กรุงเทพฯ. มหาวิทยาลัยรามคำแหง.

ประสิทธิ์ กาพย์กลอน. (2523). การศึกษาภาษาไทยตามแนวภาษาศาสตร์, พิมพ์ครั้งที่ 3, กรุงเทพฯ: ไทยวัฒนาพานิช .

ปราณี กุลวณิชย์ และ คณะ. (2537). **ภาษาทัศนา**, พิมพ์ครั้งที่ 3, กรุงเทพฯ:สำนักพิมพ์จุฬาลงกรณ์มหาวิทยาลัย

พูลพงษ์ งามเกษม. (2546). **หลักภาษาไทย** . พิษณุโลก: มหาวิทยาลัยครินทรวิโรฒพิษณุโลก

วิจิตร ขอนยาง. (2542). **หลักภาษาไทย**. สกลนคร: คณะมนุษยศาสตร์และสังคมศาสตร์.สถาบันราชภัฏสกลนคร.

วิไลวรรณขนิษฐานนท์. (2533). **ภาษาและภาษาศาสตร์**,กรุงเทพฯ: มหาวิทยาลัยธรรมศาสตร์.

วิไลวรรณ ขนิษฐานันท์. (2526). **ภาษาศาสตร์เชิงประวัติ**. วิวัฒนาการภาษาไทยและภาษาอังกฤษกรุงเทพฯ: มหาวิทยาลัยธรรมศาสตร์.

วินัย ภู่ระหงษ์. (2534). **เอกสารการสอนชุดวิชาภาษาไทย** . 3 เล่ม 2 กรุงเทพฯ. หาวิทยาลัยสุโขทัยธรรมาธิราช.

อัญชลี สิงห์น้อย. (2546). **คำนามประสม**: ศาสตร์และศิลป์ในการสร้างคำไทย, พิษณุโลก: มหาวิทยาลัยนเรศวร.

## ເອກະສານຊ້ອນທ້າຍ

**ຕາຕະລາງທີ** 1: ໂຄງສ້າງຂອງຄຳປະສົມທີ່ເປັນຄຳນາມ ໃນວັດຈະນານຸກົມ ດຣ. ທອງຄຳ ອ່ອນມະນີສອນ

| ລ/ດ | ໂຄງສ້າງ | ຈຳນວນຄຳທັງໝົດ | ຈຳນວນຄຳແຕ່ລະໂຄງສ້າງ | ສ່ວນຮ້ອຍ (%) |
|---|---|---|---|---|
| 1 | ຄຳນາມປະສົມກັບຄຳນາມ | 606 | 419 | 69.14 |
| 2 | ຄຳນາມປະສົມກັບຄຳກິລິຍາ | 606 | 81 | 13.36 |
| 3 | ຄຳນາມປະສົມກັບຄຳຄຸນນາມ | 606 | 77 | 12.70 |
| 4 | ຄຳກິລິຍາປະສົມກັບຄຳນາມ | 606 | 20 | 3.30 |
| 5 | ຄຳກິລິຍາປະສົມກັບຄຳກິລິຍາ | 606 | 4 | 0.66 |
| 6 | ຄຳນາມປະສົມກັບຄຳບຸບພະບົດ | 606 | 3 | 0.49 |
| 7 | ຄຳຄຸນນາມປະສົມກັບຄຳນາມ | 606 | 1 | 0.16 |
| 8 | ຄຳກິລິຍາປະສົມກັບຄຳຄຸນນາມ | 606 | 1 | 0.16 |
| **ລວມ** | | | 606 | 100 |

**ຕາຕະລາງທີ 2:** ສະແດງຜົນສະຫຼຸບຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍກົງຈຳແນກຕາມເກນລັກສະນະທາງວັດທະນະທຳພາສາ

| ລ/ດ | ຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍກົງ | ຄວາມໝາຍກົງ | |
|---|---|---|---|
| | | ຈຳນວນຄຳ | ສ່ວນຮ້ອຍ |
| I. | **ຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍກົງກ່ຽວກັບທຳມະຊາດ.** | | |
| 1 | ພູມີປະເທດ, ຊັບພະຍາກອນທຳມະຊາດ, ທ້ອງຟ້າ, ດວງດາວ, ອຸນຫະພູມ, ລະ ດູການ ປາກົດການ, ພະລັງງານ ແລະອຸປະກອນ | 74 | 16.29 |
| 2 | ສັດ, ຊະນິດ, ປະເພດ, ອະໄວຍະວະ, ການລ້ຽງດູ, ການລ່າ ແລະອຸປະກອນ | 45 | 10.35 |
| 3 | ພືດ, ຊະນິດ, ປະເພດ, ສ່ວນປະກອບ, ການປູກຂະຫຍາຍພັນ ແລະອຸປະກອນ | 68 | 14.97 |
| 4 | ອາຫານ, ເຄື່ອງດື່ມ, ຄຸນສົມບັດຂອງອາຫານ, ອຸປະກອນ ແລະ ວິທີປະກອບ | 40 | 8.81 |
| 5 | ທິດທາງ, ຈຳນວນ, ຂະໜາດ, ປະລິມານ, ມາດຕາ, ໄລຍະ, ອຸປະກອນ ແລະວິທີສັ່ງຕວງ, ວັດ ແລະຄຳນວນ | 12 | 2.64 |
| ລວມ | | 239 | 53.06 |

| | | | |
|---|---|---|---|
| **II.** | **ຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍກົງກ່ຽວກັບພຶດຕິກຳ ແລະກິດຈະກຳຂອງມະນຸດ** | | |
| 1 | ອະໄວຍະວະ, ພັດທະນາການ ແລະການປ່ຽນແປງຂອງຮ່າງກາຍ, ສຸຂະພາບ, ການຮັກສາ, ວິທີການຮັກສາ ແລະອຸປະກອນ. | 34 | 7.48 |
| 2 | ການແຕ່ງກາຍ, ເຄື່ອງປະດັບ, ອຸປະກອນ, ວິທີການແຕ່ງກາຍ ແລະການທຳຄວາມສະອາດ. | 18 | 3.96 |
| 3 | ສົງຄາມ, ການເມືອງ, ການປົກຄອງ, ວິທີການ, ຕຳແໜ່ງໜ້າທີ່ ແລະອຸປະກອນ | 11 | 2.42 |
| 4 | ການສະແດງອອກທາງພຶດຕິກຳ ແລະການຮັບຄວາມຮູ້ສຶກທາງສຳຜັດຂອງຮ່າງກາຍ ເຊັ່ນ ການໄດ້ຍິນ, ໄດ້ກິ່ນ, ການສະແດງຄວາມເປັນເຈົ້າຂອງ, ການກະທົບກະແທກ, ການປົກປິດເປີດເຜີຍ | 10 | 2.20 |
| 5 | ກິດຈະກຳ ແລະ ອາຊີບຕ່າງໆ | 1 | 0.22 |
| ລວມ | | 74 | 16.28 |
| **III.** | **ຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍກົງກ່ຽວກັບສະຕິປັນຍາ, ອາລົມ ແລະຄຸນຄ່າ.** | | |
| 1 | ຈິດໃຈ, ອາລົມ, ຄວາມຮູ້ສຶກນຶກຄິດ. | 3 | 0.66 |
| 2 | ຄຸນຄ່າ, ຄ່ານິຍົມ ແລະການຮຽນຮູ້. | 1 | 0.22 |
| 3 | ລັດທິ, ສາສະໜາ, ຕຳນານ, ຄວາມເຊື່ອ, ພິທີກຳ, ອຸປະກອນ ແລະສະຖານທີ່ | 15 | 3.30 |
| 4 | ວິທະຍາການຕ່າງໆ. | 6 | 1.32 |
| ລວມ | | 25 | 5.5 |
| **IV.** | **ຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍກົງກ່ຽວກັບຄວາມສຳພັນຂອງບຸກຄົນ.** | | |
| 1 | ການຈຳແນກມະນຸດອອກເປັນກຸ່ມຕາມເຊື້ອຊາດ, ເພດ, ອາຍຸ, ຄວາມສຳພັນໃນຄອບຄົວເຄືອຍາດ ແລະ ຊົນຊັ້ນວັນນະ | 18 | 3.96 |
| 2 | ການຄົມມະນາຄົມ, ຕິດຕໍ່ສື່, ວິທີການ ແລະ ອຸປະກອນ | 3 | 0.66 |
| 3 | ເສດຖະກິດ ແລະ ການຄ້າ | 7 | 1.54 |
| 4 | ສິລະປະ, ດົນຕີ, ການຫຼິ້ນ, ກິລາ, ການພະນັນ, ກົນວິທີ ແລະ ອຸປະກອນ | 26 | 5.72 |
| 5 | ທີ່ຢູ່ອາໄສ ແລະເຄື່ອງມືເຄື່ອງໃຊ້ | 60 | 13.21 |
| ລວມ | | 114 | 25.09 |
| ລວມທັງໝົດ | | 452 | 100 |

**ຕາຕະລາງທີ 3:** ສະແດງຜົນສະຫຼຸບຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍກົງຈຳແນກຕາມເກນລັກສະນະທາງວັດທະນະທຳພາສາ

| **ລ/ດ** | **ຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍແຝງ** | **ຄວາມໝາຍແຝງ** | |
|---|---|---|---|
| | | **ຈຳນວນຄຳ** | **ສ່ວນຮ້ອຍ** |
| **I.** | **ຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍກົງກ່ຽວກັບທຳມະຊາດ** | | |
| 1 | ພູມີປະເທດ, ຊັບພະຍາກອນທຳມະຊາດ, ທ້ອງຟ້າ, ດວງດາວ, ອຸນຫະພູມ, ລະ ດູການ ປາກົດການ, ພະລັງງານ ແລະ ອຸປະກອນ. | 3 | 1.85 |
| 2 | ສັດ, ຊະນິດ, ປະເພດ, ອະໄວຍະວະ, ການລ້ຽງດູ, ການລ່າ ແລະ ອຸປະກອນ | 13 | 8.02 |
| 3 | ພືດ, ຊະນິດ, ປະເພດ, ສ່ວນປະກອບ, ການປູກຂະຫຍາຍພັນ ແລະ ອຸປະກອນ | 67 | 41.35 |
| 4 | ອາຫານ, ເຄື່ອງດື່ມ, ຄຸນສົມບັດຂອງສານອາຫານ, ອຸປະກອນ ແລະ ວິທີປະກອບ | 12 | 7.40 |
| 5 | ທິດທາງ, ຈຳນວນ, ຂະໜາດ, ປະລິມານ, ມາດຕາ, ໄລຍະ, ອຸປະກອນ ແລະ ວິທີ ຊັ່ງ ຕວງ ວັດ ແລະ ຄຳນວນ | 4 | 2.46 |
| **ລວມ** | | 99 | 61.08 |
| **II.** | **ຄຳປະສົມທີ່ເປັນຄຳນາມທີ່ມີຄວາມໝາຍແຝງກ່ຽວກັບພຶດຕິກຳ ແລະ ກິດຈະກຳຂອງມະນຸດ** | | |

| | | | |
|---|---|---|---|
| 1 | ອະໄວຍະວະ, ພັດທະນາການ ແລະ ການປ່ຽນແປງຂອງຮ່າງກາຍ, ສຸຂະພາບ, ການຮັກສາ, ວິທີການຮັກສາ ແລະ ອຸປະກອນ. | 7 | 4.32 |
| 2 | ການແຕ່ງກາຍ, ເຄື່ອງປະດັບ, ອຸປະກອນ, ວິທີການແຕ່ງກາຍ ແລະ ການທໍາຄວາມສະອາດ | 3 | 1.85 |
| 3 | ສົງຄາມ, ການເມືອງ, ການປົກຄອງ, ວິທີການ, ຕໍາແໜ່ງໜ້າທີ່ ແລະອຸປະກອນ. | 3 | 1.85 |
| 4 | ການສະແດງອອກທາງພຶດຕິກໍາ ແລະການຮັບຄວາມຮູ້ສຶກທາງສໍາຜັດຂອງຮ່າງກາຍ ເຊັ່ນການໄດ້ຍິນ, ໄດ້ກິ່ນ, ການສະແດງຄວາມເປັນເຈົ້າຂອງ, ການກະທົບກະແທກ, ການປົກປິດເປີດເຜີຍ | 7 | 4.32 |
| 5 | ກິດຈະກໍາ ແລະອາຊີບຕ່າງໆ | 4 | 2.46 |
| **ລວມ** | | 24 | 14.8 |
| **III.** | **ຄໍາປະສົມທີ່ເປັນຄໍານາມທີ່ມີຄວາມໝາຍແຝງກ່ຽວກັບສະຕິປັນຍາ, ອາລົມ ແລະຄຸນຄ່າ** | | |
| 1 | ຈິດໃຈ, ອາລົມ, ຄວາມຮູ້ສຶກນຶກຄິດ | 10 | 6.17 |
| 2 | ຄຸນຄ່າ, ຄ່ານິຍົມ ແລະການຮຽນຮູ້. | 1 | 0.61 |
| 3 | ລັດທິ, ສາສະໜາ, ຕໍານານ, ຄວາມເຊື່ອ, ພິທີກໍາ, ອຸປະກອນ ແລະ ສະຖານທີ່ | 4 | 2.46 |
| 4 | ວິທະຍາການຕ່າງໆ | 3 | 1.85 |
| **ລວມ** | | 18 | 11.09 |
| **IV.** | **ຄໍາປະສົມທີ່ເປັນຄໍານາມທີ່ມີຄວາມໝາຍແຝງກ່ຽວກັບຄວາມສໍາພັນຂອງບຸກຄົນ.** | | |
| 1 | ການຈໍາແນກມະນຸດອອກເປັນກຸ່ມຕາມເຊື້ອຊາດ, ເພດ, ອາຍຸ, ຄວາມສໍາພັນໃນຄອບຄົວ, ເຄືອຍາດ ແລະ ຊົນຊັ້ນວັນນະ | 6 | 3.70 |
| 2 | ການຄົມມະນາຄົມ, ຕິດຕໍ່ສື່ສານ, ວິທີການ ແລະ ອຸປະກອນ. | 5 | 3.08 |
| 3 | ເສດຖະກິດ ແລະ ການຄ້າ. | 0 | 0 |
| 4 | ສິລະປະ, ດົນຕີ, ການຫຼິ້ນ, ກິລາ, ການພະນັນ, ກົນວິທີ ແລອຸປະກອນ | 3 | 1.85 |
| 5 | ທີ່ຢູ່ອາໄສ ແລະເຄື່ອງມືເຄື່ອງໃຊ້. | 7 | 4.32 |
| **ລວມ** | | 21 | 12.95 |
| **ລວມທັງໝົດ** | | 162 | 100 |